**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 169 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 05 / 07 / 21

# ມະຕິ

## ຂອງຄະນະປະຈຳສະພາແຫ່ງຊາດ

### ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກຳມາທິການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

---

- ອີງຕາມ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ, ສະບັບເລກທີ 64/ສພຊ, ລົງວັນທີ 9 ທັນວາ 2015, ສະບັບປັບປຸງ ເລກທີ 10/ສພຊ, ລົງວັນທີ 14 ພະຈິກ 2016 ແລະ ສະບັບປັບປຸງ ເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມມະຕິວ່າດ້ວຍ ການເຄື່ອນໄຫວຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 163/ຄປຈ, ລົງວັນທີ 5 ກໍລະກົດ 2021.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິຜົນ

**ຄະນະປະຈຳສະພາແຫ່ງຊາດຕົກລົງ:**

**ໝວດທີ 1**

**ບົດບັນຍັດທົ່ວໄປ**

**ມາດຕາ ຈຸດປະສົງ**

ມະຕິສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານ ຂອງກຳມາທິການປ້ອງກັນຊາດ-

ປ້ອງກັນຄວາມສະຫງົບ ແນໃສ່ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ ເຂົ້າໃນການປະຕິບັດໜ້າທີ່ການເມືອງຂອງຕົນ ໃຫ້ມີປະສິດທິພາບ ນັບມື້ສູງຂຶ້ນ ປະກອບສ່ວນເຮັດໃຫ້ວຽກງານຂອງສະພາແຫ່ງຊາດ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີຜົນສຳເລັດ ຕາມລະດັບຄາດໝາຍ.

## ມາດຕາ 2 ທີ່ຕັ້ງ

ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ, ຊຶ່ງໄດ້ຖືກຮັບຮອງເອົາໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ, ປະກອບດ້ວຍສະມາຊິກສະພາແຫ່ງຊາດທີ່ເປັນກຳມະການສັງກັດກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບມີຊື່ຫຍໍ້ເປັນຕົວອັກສອນ "ກປຊສ".

## ມາດຕາ 3 ພາລະບົດບາດ

ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະຕິບັດພາລະບົດບາດ ເປັນເສນາທິການໃຫ້ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການສ້າງ ແລະ ປັບປຸງກົດໝາຍ, ຄົ້ນຄວ້າບັນຫາສຳຄັນພື້ນຖານຂອງປະເທດຊາດ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ ຫຼື ຕາມການມອບໝາຍ ຂອງຄະນະປະຈຳສະພາແຫ່ງຊາດ.

### ໝວດທີ 2
### ໜ້າທີ່ ແລະ ຂອບເຂດສິດ ຂອງກຳມາທິການ

## ມາດຕາ 4 ໜ້າທີ່

**4.1. ດ້ານນິຕິບັນຍັດ:**

1. ປະສານສົມທົບກັບກຳມາທິການຂອງສະພາແຫ່ງຊາດ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ ເພື່ອສະເໜີຄະນະປະຈຳສະພາແຫ່ງຊາດພິຈາລະນາ;
2. ຄົ້ນຄ້ວາ ແລະ ປະກອບຄຳເຫັນ ໃສ່ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດ ແລະ ນິຕິກຳອື່ນໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມຂະແໜງການກ່ຽວຂ້ອງສະເໜີມາ;
3. ປະສານສົມທົບກັບກຳມາທິການອື່ນ, ກະຊວງ ແລະ ຂະແໜງການກ່ຽວຂ້ອງ ເພື່ອຈັດຕັ້ງກອງປະຊຸມສຳມະນາ ຍົກລະດັບຄວາມຮູ້ທາງດ້ານກົດໝາຍ ໃຫ້ແກ່ກຳລັງປະກອບອາວຸດ. ພ້ອມກັນນັ້ນ, ກໍ່ຊຸກຍູ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ ໃຫ້ອອກນິຕິກຳໃຕ້ກົດໝາຍ ເພື່ອຮັບໃຊ້ການປະຕິບັດໜ້າທີ່ວຽກງານຂອງຕົນ;

4. ປະສານສົມທົບກັບກຳມາທິການອື່ນ, ອົງການທີ່ກ່ຽວຂ້ອງ ເພື່ອນຳເອົາບັນດາກົດໝາຍ ແລະ ນິຕິກຳທີ່ພົວພັນກັບ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ ໄປໂຄສະນາເຜີຍແຜ່ໃຫ້ເລື້ອມສົມ ແລະ ຈັດຕັ້ງປະຕິບັດ.

**4.2. ດ້ານການ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:**

1. ປະສານສົມທົບກັບອົງການທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ພິຈາລະນາ ການໃຫ້ສັດຕະຍາບັນແກ່ສົນທິສັນຍາ, ສົນທິສັນຍາສາກົນ, ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ເຂົ້າຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າປະກອບຄຳເຫັນໃສ່ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດໃນຂະແໜງການທີ່ຕົນຮັບຜິດຊອບ;
3. ສະເໜີອົງການທີ່ກ່ຽວຂ້ອງ ພິຈາລະນາ ກ່ຽວກັບງົບປະມານໃຊ້ຈ່າຍໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ດ້ວຍການພິຈາລະນາຕັດ, ຫຼຸດຜ່ອນ ຫລື ເພີ່ມງົບປະມານ ທີ່ເຫັນວ່າມີຄວາມຈຳເປັນ;
4. ຮັບ ແລະ ພິຈາລະນາບົດລາຍງານ ຂອງຂະແໜງການຕ່າງໆ ກ່ຽວກັບ ບັນຫາສຳຄັນພື້ນຖານຂອງປະເທດຊາດຕາມພາລະບົດບາດຂອງຕົນ.

**4.3. ດ້ານການ ຕິດຕາມກວດກາ:**

1. ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດໜ້າທີ່ການເມືອງ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳຕ່າງໆ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ;
2. ພົວພັນປະສານສົມທົບກັບການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ແລະ ຊັກຖາມບັນຫາໃດໜຶ່ງທີ່ກ່ຽວຂ້ອງພົວພັນເຖິງວຽກງານຂອງຕົນ;
3. ຄົ້ນຄວ້າໂຈະການຈັດຕັ້ງປະຕິບັດ, ການປັບປຸງ, ຍົກເລີກ, ລົບລ້າງກົດໝາຍ ແລະ ນິຕິກຳອື່ນ ທີ່ບໍ່ສອດຄ່ອງກັບກົດໝາຍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ, ເພື່ອສະເໜີໃຫ້ຄະນະປະຈຳສະພາແຫ່ງຊາດພິຈາລະນາ;
4. ສົມທົບກັບກຳມາທິການທີ່ກ່ຽວຂ້ອງ ຕິດຕາມກວດກາວຽກງານກໍ່ສ້າງຮາກຖານການເມືອງ ທີ່ພົວພັນເຖິງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຕິດພັນກັບວຽກງານພັດທະນາ 3 ສ້າງ ຂອງລັດຖະບານ ແລະ ບັນຫາວຽກງານຊາຍແດນລະຫວ່າງປະເທດ.

**ມາດຕາ 5 ໜ້າທີ່ອື່ນໆ**

1. ສ້າງແຜນການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະ;
2. ດຳເນີນກອງປະຊຸມຄະນະກຳມາທິການ, ກອງປະຊຸມຄົບຄະນະ, ກອງປະຊຸມສຳມະນາ ແລະ ກອງປະຊຸມອື່ນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;
3. ສະເໜີຄະນະປະຈຳສະພາແຫ່ງຊາດ ແຕ່ງຕັ້ງ, ຍຸບເລີກກົມ, ພະແນກທີ່ຂຶ້ນກັບກຳມາທິການ ແລະ ແຕ່ງຕັ້ງໜ່ວຍສະເພາະກິດໃນເມື່ອມີຄວາມຈຳເປັນ;
4. ຕ້ອນຮັບ, ຊັກຖາມບຸກຄົນ ຫຼື ການຈັດຕັ້ງ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ແລະ ສະມາຊິກສະຫະພັນນັກຮົບເກົ່າ, ຄຳສະເໜີຂອງປະຊາຊົນບັນດາເຜົ່າ ຕໍ່ບັນຫາໃດໜຶ່ງ ໂດຍຜ່ານໂທລະສັບສາຍດ່ວນ ຫຼື ບັນດາຄຳຄິດເຫັນຕ່າງໆ ທີ່ມີຄວາມສົນໃຈຕາມຄວາມຮັບຜິດຊອບຂອງຕົນ;
5. ສະເໜີຍົກລະດັບດ້ານຕ່າງໆ ໃຫ້ແກ່ພະນັກງານ-ນັກຮົບ ໄປທັດສະນະສຶກສາແລກປ່ຽນບົດຮຽນ, ພັກຜ່ອນ ແລະ ອື່ນໆ ທັງພາຍໃນ ແລະ ຕ່າງປະເທດ;

6. ຕິດຕາມ, ຄົ້ນຄ້ວາ ກຳແໜັ້ນສະພາບການ ຂໍ້ມູນ-ຂ່າວສານ, ເລັ່ງແກ້ນະໂຍບາຍຂອງສັດຕູ ແລະ ປະກົດການຫຍໍ້ທໍ້ທີ່ພົ້ນເດັ່ນແຕ່ລະໄລຍະ ທີ່ພົວພັນເຖິງຄວາມສະຫງົບແຫ່ງຊາດ ເພື່ອລາຍງານໃຫ້ປະທານ ແລະ ຮອງປະທານສະພາແຫ່ງຊາດ ເປັນປົກກະຕິ;

7. ລົງພົບປະຢ້ຽມຢາມກຳລັງປະກອບອາວຸດ ຢູ່ບັນດາກົມກອງຮາກຖານໂດຍຜ່ານສາຍຕັ້ງ;

8. ຕິດຕາມ, ຊຸກຍູ້ ຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຫ່ງຊາດ ຕາມພາລະບົດບາດໜ້າທີ່ຂອງຕົນ;

9. ພົວພັນຮ່ວມມື ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ໂດຍສະເພາະ ຕໍ່ປະເທດເພື່ອນມິດຍຸດທະສາດ;

10. ສະເໜີແຕ່ງຕັ້ງ, ຍົກຍ້າຍ, ເລື່ອນຊັ້ນ, ຍ້ອງຍໍ ແລະ ລົງວິໄນ ຕໍ່ພະນັກງານ-ນັກຮົບຂອງຕົນ ຕາມລະບຽບກົດໝາຍຂອງກຳລັງປະກອບອາວຸດ;

11. ຊີ້ນຳວຽກງານວິຊາການຂອງບັນດາກົມ ທີ່ເປັນເສນາທິການໃຫ້ແກ່ຕົນ;

12. ສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານການເຄື່ອນໄຫວວຽກງານຂອງກຳມາທິການ ໃຫ້ຄະນະປະຈຳສະພາແຫ່ງຊາດ ປະຈຳ 1 ເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ;

13. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

## ໝວດທີ 3
## ໂຄງປະກອບກົງຈັກການຈັດຕັ້ງ

### ມາດຕາ 6 ໂຄງປະກອບກົງຈັກການຈັດຕັ້ງຂອງ ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະກອບດ້ວຍ:

1.ປະທານກຳມາທິການ;

2.ຮອງປະທານກຳມາທິການຈຳນວນໜຶ່ງ;

3.ກຳມະການສັງກັດກຳມາທິການ;

4.ກົມທີ່ເປັນເສນາທິການຈຳນວນ 2 ກົມຄື: ກົມປ້ອງກັນຊາດ ແລະ ກົມປ້ອງກັນຄວາມສະຫງົບ.

ນອກຈາກນີ້ ຍັງມີພະແນກ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ວິຊາການຈຳນວນໜຶ່ງ ທີ່ເປັນເສນາທິການ ທາງດ້ານວິຊາການໃຫ້ແກ່ຕົນ.

ສ່ວນການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ບັນດາກົມກົງຈັກວິຊາການ ແມ່ນຄະນະຂອງທີການສະພາແຫ່ງຊາດ ອອກຂໍ້ຕົກລົງຕ່າງຫາກ.

### ມາດຕາ 7 ໜ້າທີ່ ແລະ ຂອບເຂດສິດ ຂອງປະທານກຳມາທິການ

1. ຮັບຜິດຊອບຊີ້ນຳ-ນຳພາລວມ, ລົງເລິກວຽກງານການເມືອງແນວຄິດ, ການຈັດຕັ້ງ ແລະ ຮັບຜິດຊອບໂດຍກົງຮອບດ້ານ ຕໍ່ຄະນະປະຈຳສະພາແຫ່ງຊາດ;

2. ສະເໜີບັນຫາລັບຮີບດ່ວນ ແລະ ວິທີແກ້ໄຂຕໍ່ປະທານ, ຮອງປະທານສະພາແຫ່ງຊາດ ແລະ ພົວພັນວຽກງານທີ່ຈຳເປັນ;

3. ຊີ້ນຳສ້າງແຜນການເຄື່ອນໄຫວວຽກງານ, ງົບປະມານຂອງກຳມາທິການໃນແຕ່ລະໄລຍະ ແລະ ແບ່ງຄວາມຮັບຜິດຊອບໃຫ້ຮອງປະທານ ແລະ ກຳມະການສັງກັດກຳມາທິການ ເພື່ອຈັດຕັ້ງປະຕິບັດ;
4. ຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳອື່ນຂອງນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ແລະ ສະມາຊິກສະຫະພັນນັກຮົບເກົ່າ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ;
5. ຊີ້ນຳ, ຕິດຕາມກວດກາ ແລະ ຊຸກຍູ້ການເຄື່ອນໄຫວວຽກງານຂອງກຳມະການ;
6. ເຂົ້າຮ່ວມກອງປະຊຸມຄະນະປະຈຳສະພາແຫ່ງຊາດຢ່າງເປັນປົກກະຕິ;
7. ຮຽກເຊີນ ແລະ ເປັນປະທານກອງປະຊຸມຄົບຄະນະຂອງກຳມາທິການ;
8. ອອກຂໍ້ຕົກລົງ, ຄຳແນະນຳ, ຄຳສັ່ງ ແລະ ແຈ້ງເຊີນ ກ່ຽວກັບວຽກງານຂອງກຳມາທິການ;
9. ມີຄຳເຫັນ, ຕົກລົງບັນຫາໃດໜຶ່ງ ແລະ ລົງລາຍເຊັນຕໍ່ເອກະສານຕ່າງໆຂອງກຳມາທິການ;
10. ສະເໜີແຕ່ງຕັ້ງ, ສັບຊ້ອນພະນັກງານຢູ່ໃນຄວາມຮັບຜິດຊອບຂອງຕົນ, ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ທັດສະນະສຶກສາ ຫຼື ຮັບຜິດຊອບວຽກງານໃດໜຶ່ງຢູ່ພາຍໃນ ແລະ ຕ່າງປະເທດ;
11. ພົບປະ, ເຊື້ອເຊີນບັນດາຄະນະນຳກະຊວງທີ່ກ່ຽວຂ້ອງ ມາຊີ້ແຈງກ່ຽວກັບບັນຫາໃດໜຶ່ງ ຕາມຂອບເຂດຄວາມຮັບຜິດຊອບຂອງກຳມາທິການ ທີ່ເຫັນວ່າມີຄວາມຈຳເປັນ;
12. ພົວພັນຮ່ວມມື ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 8 ໜ້າທີ່ ແລະ ຂອບເຂດສິດ ຂອງຮອງປະທານກຳມາທິການ**

ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ຊ່ວຍປະທານກຳມາທິການ ໃນການປະຕິບັດໜ້າທີ່ວຽກງານ ຂອງກຳມາທິການ ດັ່ງນີ້:

1. ຄົ້ນຄວ້າຄຳສະເໜີຂອງນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ, ສະມາຊິກສະຫະພັນນັກຮົບເກົ່າ ແລະ ປະຊາຊົນບັນດາເຜົ່າ ທີ່ມີການພົວພັນເຖິງກຳລັງປະກອບອາວຸດ;
2. ຕິດຕາມ, ກວດກາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວແຕ່ລະໄລຍະ ຂອງກຳມາທິການ;
3. ຊີ້ນຳວຽກງານພັກ-ພະນັກງານ ແລະ ສ້າງຄວາມເຂັ້ມແຂງໃຫ້ກຳມາທິການ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງປະທານກຳມາທິການ.

**ມາດຕາ 9 ໜ້າທີ່ ແລະ ຂອບເຂດສິດ ຂອງກຳມະການສັງກັດກຳມາທິການ**

1. ຜັນຂະຫຍາຍເນື້ອໃນນິຕິກຳ, ແຜນການເຄື່ອນໄຫວວຽກງານ ຂອງກຳມາທິການ ໃນແຕ່ລະໄລຍະຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ປະກອບຄຳເຫັນຕໍ່ຮ່າງນິຕິກຳ ແລະ ແຜນການເຄື່ອນໄຫວວຽກງານຂອງກຳມາທິການ;

3. ພົວພັນປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ພົບປະ, ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີ, ຄວາມຂັດຂ້ອງໝອງໃຈຂອງປະຊາຊົນ ກໍຄື ກຳລັງປະກອບອາວຸດ, ສະມາຊິກສະຫະພັນນັກຮົບເກົ່າ ແລະ ໃຫ້ຄຳປຶກສາຊີ້ແຈງບັນຫາຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ໃນແຕ່ລະໄລຍະ ໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ໃນກໍລະນີມີສະພາບພົ້ນເດັ່ນໃຫ້ລາຍງານໂດຍກົງຕໍ່ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ການມອບໝາຍຂອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

## ໝວດທີ4
## ກອງປະຊຸມ

### ມາດຕາ10 ກອງປະຊຸມຂອງກຳມາທິການ

ກອງປະຊຸມຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີ 2 ປະເພດຄື:

1). ກອງປະຊຸມຄະນະກຳມາທິການ
2). ກອງປະຊຸມຄົບຄະນະຂອງກຳມາທິການ

### ມາດຕາ 11 ກອງປະຊຸມຄະນະນຳກຳມາທິການ

ກອງປະຊຸມຄະນະນຳກຳມາທິການ ເປີດຂຶ້ນເດືອນລະຄັ້ງ ໂດຍແມ່ນປະທານກຳມາທິການ ເປັນຜູ້ຮຽກໂຮມ ຊຶ່ງມີ ປະທານ, ຮອງປະທານ, ກົມທີ່ເປັນເສນາທິການເຂົ້າຮ່ວມ ແລະ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຜ່ານບົດສະຫຼຸບ-ແຜນການປະຈຳເດືອນ ແລະ ຜ່ານແຜນການເດືອນຕໍ່ໄປຂອງກຳມາທິການ;
2. ຄົ້ນຄ້ວາ, ສ້າງຮ່າງນິຕິກຳທີ່ພົວພັນກັບວຽກງານຂອງກຳມາທິການ;
3. ຄົ້ນຄ້ວາ ແລະ ປະກອບຄຳເຫັນໃສ່ຮ່າງນິຕິກຳຕ່າງໆ ຂອງບັນດາກຳມາທິການອື່ນ ຫຼື ຂອງຄະນະປະຈຳສະພາແຫ່ງຊາດທີ່ສະເໜີມາ;
4. ປຶກສາຫາລືກ່ຽວກັບ ການປະຕິບັດວຽກງານຕົວຈິງເປັນຕົ້ນ: ວິທີການ ແລະ ຮູບການຕິດຕາມກວດກາໃນຂົງເຂດຄວາມຮັບຜິດຊອບຂອງຕົນ;
5. ຄົ້ນຄ້ວາ ແລະ ພິຈາລະນາບົດລາຍງານຂອງກຳມະການປະຈຳເຂດເລືອກຕັ້ງຕ່າງໆ ທີ່ພົວພັນເຖິງສະພາບການ, ບັນຫາທີ່ພົ້ນເດັ່ນ ແລະ ສະເໜີມາດຕະການແກ້ໄຂ ເພື່ອລາຍງານຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
6. ຄົ້ນຄ້ວາແກ້ໄຂຄຳສະເໜີຂອງປະຊາຊົນບັນດາເຜົ່າ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ແລະ ສະມາຊິກສະຫະພັນນັກຮົບເກົ່າ;
7. ກະກຽມກອງປະຊຸມຄົບຄະນະຂອງກຳມາທິການ ແລະ ກອງປະຊຸມສະພາແຫ່ງຊາດ;
8. ປຶກສາຫາລືວຽກງານອື່ນໆທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 12 ກອງປະຊຸມຄົບຄະນະຂອງກຳມາທິການ**

ກອງປະຊຸມຄົບຄະນະຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປີດຂຶ້ນໜຶ່ງເທື່ອຕໍ່ປີ, ກ່ອນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ໂດຍການເຂົ້າຮ່ວມຂອງປະທານ, ຮອງປະທານ ແລະ ກຳມະການຢ່າງໜ້ອຍ 2/3 ຂອງຈຳນວນກຳມະການທັງໝົດ; ໃນກໍລະນີມີຄວາມຈຳເປັນ, ກອງປະຊຸມຄົບຄະນະຂອງກຳມາທິການ ອາດຈະເປີດຂຶ້ນໃນເວລາໃດກໍ່ໄດ້ ຫຼື ຈະເປີດຮ່ວມກັບກຳມາທິການອື່ນ ແລະ ເຊີນບຸກຄົນອື່ນທີ່ກ່ຽວຂ້ອງເຂົ້າຮ່ວມ ບົນພື້ນຖານການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ.

ກອງປະຊຸມຄົບຄະນະຂອງກຳມາທິການ ມີເນື້ອໃນດັ່ງນີ້:

1. ສະຫຼຸບ, ຕີລາຄາການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວປະຈຳປີຂອງກຳມາທິການ;
2. ຮັບຟັງການປະກອບຄຳຄິດ, ຄຳເຫັນ, ຄຳສະເໜີ, ຄວາມສົນໃຈຂອງກຳມະການ, ຂອງຕົວແທນຂະແໜງການທີ່ກ່ຽວຂ້ອງ ແລະ ແຂກຖືກເຊີນເຂົ້າຮ່ວມກອງປະຊຸມ;
3. ຮັບຟັງລາຍງານສະພາບການ ແລະ ບັນຫາທີ່ພົ້ນເດັ່ນ, ວິທີການແກ້ໄຂ ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະພາແຫ່ງຊາດ;
4. ຄົ້ນຄ້ວາ, ປະກອບຄວາມເຫັນຕໍ່ຮ່າງກົດໝາຍ ແລະ ຮ່າງນິຕິກຳອື່ນ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ;
5. ຄົ້ນຄ້ວາປະກອບຄຳເຫັນ ຕໍ່ບັດຜູ້ດາງໜ້າກຳມາທິການ ທີ່ຈະສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ;
6. ຄົ້ນຄ້ວາບັນຫາຕ່າງໆ ທີ່ພົວພັນເຖິງການຈັດຕັ້ງປະຕິບັດວຽກງານຂອງກຳມາທິການ;
7. ຜ່ານມະຕິຂອງກອງປະຊຸມຄົບຄະນະຂອງກຳມາທິການ.

**ໝວດທີ 5**
**ຫຼັກການ ແລະ ແບບແຜນວິທີເຮັດວຽກ**

**ມາດຕາ 13 ຫຼັກການ**

ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈັດຕັ້ງ ແລະ ເຄື່ອນໄຫວຕາມຫຼັກການລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ເອົາກອງປະຊຸມເປັນບ່ອນອີງປຶກສາຫາລື ແລະ ຕົກລົງຕາມສຽງສ່ວນຫຼາຍ.

**ມາດຕາ 14 ແບບແຜນວິທີເຮັດວຽກ**

ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຫັນເອົາແຜນການ, ແຜນງານ, ໂຄງການ ຂອງຄະນະປະຈຳສະພາແຫ່ງຊາດ ມາເປັນແຜນການ, ແຜນງານອັນລະອຽດ ພ້ອມທັງສູ້ຊົນປະຕິບັດໃຫ້ສຳເລັດ.

ສະຫຼຸບ, ຖອດຖອນບົດຮຽນ ແລະ ປະຕິບັດລະບອບສົ່ງແສງລາຍງານ ຂໍທິດຊີ້ນຳຈາກຄະນະນຳ ຢ່າງເປັນປົກກະຕິ.

**ມາດຕາ 15 ການພົວພັນ ແລະ ປະສານງານ ພາຍໃນສະພາແຫ່ງຊາດ**

**1. ການພົວພັນ ແລະ ການປະສານງານ ກັບຄະນະປະຈຳສະພາແຫ່ງຊາດ**

ການພົວພັນ ແລະ ການປະສານງານ ກັບຄະນະປະຈຳສະພາແຫ່ງຊາດ ໃນການລາຍງານ ແລະ ຂໍທິດຊີ້ນຳ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ: ການສ້າງ, ປັບປຸງກົດໝາຍ, ການຕິດຕາມກວດ

ກາ, ການຄົ້ນຄວ້າບັນຫາພື້ນຖານສຳຄັນຂອງປະເທດຊາດ ແລະ ບັນຫາອື່ນ ທີ່ຕິດພັນກັບວຽກງານຂອງກຳມາທິການ.

**2. ການພົວພັນ ແລະ ປະສານງານ ກັບບັນດາກຳມາທິການ ໃນສະພາແຫ່ງຊາດ**

ການພົວພັນ ແລະ ການປະສານງານ ກັບບັນດາກຳມາທິການໃນສະພາແຫ່ງຊາດດ້ວຍກັນ ດ້ວຍການປຶກສາຫາລື, ປະສານສົມທົບ ແລະ ການແລກປ່ຽນຂໍ້ມູນ-ຂ່າວສານ, ການຖອດຖອນບົດຮຽນ ເຊິ່ງກັນ ແລະ ກັນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ: ການສ້າງ, ປັບປຸງກົດໝາຍ, ການຕິດຕາມກວດກາ ແລະ ການຄົ້ນຄວ້າບັນຫາພື້ນຖານສຳຄັນຂອງປະເທດຊາດ, ການແກ້ໄຂຄຳສະເໜີ ແລະ ບັນຫາອື່ນ ທີ່ຕິດພັນກັບ ກຳມາທິການ.

**3. ການພົວພັນ ແລະ ປະສານງານກັບຄະນະເລຂາທິການສະພາແຫ່ງຊາດ**

ການພົວພັນ ແລະ ການປະສານງານ ກັບຄະນະເລຂາທິການສະພາແຫ່ງຊາດ ດ້ວຍການປຶກສາຫາລື, ປະສານສົມທົບ, ການແລກປ່ຽນຂໍ້ມູນ-ຂ່າວສານ, ການກະກຽມ ແລະ ດຳເນີນກອງປະຊຸມສະພາແຫ່ງຊາດເປັນຕົ້ນ: ການຮ່າງບົດລາຍງານຂອງສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ, ການສ້າງຮ່າງມະຕິຂອງກອງປະຊຸມສະພາແຫ່ງຊາດ, ການຄຸ້ມຄອງບໍລິການ, ແຜນການ ແລະ ການເງິນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງກຳມາທິການ ແລະ ບັນຫາອື່ນ ທີ່ຕິດພັນກັບກຳມາທິການ.

**4. ການພົວພັນ ແລະ ປະສານງານ ກັບສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ**

ການພົວພັນ ແລະ ການປະສານງານ ກັບສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ດ້ວຍການປຶກສາຫາລື, ປະສານສົມທົບ ແລະ ການແລກປ່ຽນຂໍ້ມູນຂ່າວ-ສານ, ການຖອດຖອນບົດຮຽນ ເຊິ່ງກັນ ແລະ ກັນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ: ການຄົ້ນຄວ້າທິດສະດີ ແລະ ນິຕິກຳ, ສ້າງຖານຂໍ້ມູນວິທະຍາສາດ, ນິຕິກຳ ເພື່ອຊ່ວຍໜູນ ແລະ ຮັບໃຊ້ກຳມາທິການ, ການຝຶກອົບຮົມຍົກລະດັບ ໃຫ້ແກ່ກຳມາທິການ ແລະ ບັນຫາອື່ນ ທີ່ຕິດພັນກັບວຽກງານຂອງກຳມາທິການ.

**5. ການພົວພັນ ແລະ ປະສານງານ ກັບສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ**

ການພົວພັນ ແລະ ການປະສານງານ ກັບສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ດ້ວຍການປະສານສົມທົບ ກ່ຽວກັບ ວຽກງານການສ້າງ, ປັບປຸງກົດໝາຍ ແລະ ນິຕິກຳ; ການຕິດຕາມກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ຢູ່ທ້ອງຖິ່ນ; ການບຳລຸງສ້າງ ຍົກລະດັບກຳມະການສັງກັດກຳມາທິການ ແລະ ວິຊາການທີ່ກ່ຽວຂ້ອງ ຢູ່ທ້ອງຖິ່ນ; ການຄົ້ນຄວ້າບັນຫາສຳຄັນ ທີ່ຕິດພັນກັບທ້ອງຖິ່ນ ແລະ ບັນຫາອື່ນ ທີ່ຕິດພັນກັບວຽກງານຂອງກຳມາທິການ.

ໃນເວລາລົງເຄື່ອນໄຫວວຽກງານຢູ່ທ້ອງຖິ່ນ ຕ້ອງໄດ້ແຈ້ງໃຫ້ປະທານສະພາປະຊາຊົນຂັ້ນແຂວງ, ນະຄອນຫຼວງ, ກຳມະການຂອງກຳມາທິການ ເພື່ອຊາບ ແລະ ອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານດັ່ງກ່າວ.

**ມາດຕາ 16 ການປະສານງານ ກັບພາກສ່ວນພາຍນອກ**

ປະສານສົມທົບໂດຍກົງ ກັບກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນກົດໝາຍ ແລະ ມະຕິສະບັບນີ້.

ປະສານສົມທົບ ກັບບັນດາກະຊວງ, ອົງການ, ຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຄວາມຮັບຜິດຊອບຂອງຕົນ.

ໃນເວລາລົງເຄື່ອນໄຫວວຽກງານຢູ່ກົມກອງ ແລະ ຂະແໜງການໃດໜຶ່ງທີ່ຂຶ້ນກັບສາຍຕັ້ງ ຕ້ອງໄດ້ແຈ້ງໃຫ້ບັນດາກະຊວງ, ອົງການ ທີ່ກ່ຽວຂ້ອງ ເພື່ອຊາບ ແລະ ອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານດັ່ງກ່າວ.

## ໝວດທີ 6
## ງົບປະມານ ແລະ ຕາປະທັບ

### ມາດຕາ 17 ງົບປະມານຂອງກຳມາທິການ

ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີງົບປະມານຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

### ມາດຕາ 18 ຕາປະທັບຂອງກຳມາທິການ

ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຕາປະທັບສະເພາະຂອງຕົນເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາແຫ່ງຊາດ" ເບື້ອງລຸ່ມຂຽນວ່າ "ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 19 ການຈັດຕັ້ງປະຕິບັດ

ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 20 ຜົນສັກສິດ

ມະຕິສະບັບນີ້ ປ່ຽນແທນມະຕິ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະບັບ ເລກທີ 0146/ຄປຈ, ລົງວັນທີ 29/09/2016 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

**ປອ ໄຊສົມພອນ ພົມວິຫານ**